ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງສາລະວັນ

ເລກທີ 61 /ສພຂ.ສລ

ສາລະວັນ, ວັນທີ 9 ສິງຫາ 2024

[illegible] ຂອງ [illegible] ສາລະວັນ

1226

9. 8. 24

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ

## ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນ ຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2024

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ ປີ 2015 ມາດຕາ 77 ກ່ຽວກັບສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ;
- ອີງຕາມ ກົດໝາຍວ່າ ດ້ວຍການປັບປຸງບາງມາດຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ) ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ ປີ 2020 ມາດຕາ 60 ຂໍ້ 1;
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ, ລົງວັນທີ 30 ກໍລະກົດ 2024 ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນ ທ້າຍປີ 2024.

ຜ່ານການຮັບຟັງການລາຍງານຂອງອົງການປົກຄອງແຂວງ ແລະ ການຄົ້ນຄວ້າປະກອບຄຳຄິດຄຳເຫັນ ຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ໃນກອງປະຊຸມສະໄໝສາມັນເທື່ອທີ 07 ຂອງສະພາປະຊາຊົນແຂວງສາລະວັນ ຊຸດທີ II ໃນລະຫວ່າງວັນທີ 30-31 ກໍລະກົດ 2024

## ກອງປະຊຸມຕົກລົງ:

**ມາດຕາ 01 ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນ ຕົ້ນປີ 2024**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີຕໍ່ເນື້ອໃນບົດລາຍງານຂອງອົງການປົກຄອງແຂວງ ໃນການຈັດຕັ້ງປະຕິບັດມະຕິຂອງສະພາປະຊາຊົນແຂວງ ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນຕົ້ນປີ 2024 ຢູ່ໃນສະພາບການຂອງໂລກ ແລະ ພາກພື້ນທີ່ຍັງສືບຕໍ່ຜັນແປຢ່າງສັບສົນ, ຢູ່ແຂວງຂອງພວກເຮົາ ຄຽງຄູ່ກັບຫຼາຍດ້ານ ກໍ່ຍັງສືບຕໍ່ປະເຊີນກັບຄວາມຫຍຸ້ງຍາກ ແລະ ສິ່ງທ້າທາຍໃນຫຼາຍຢ່າງເປັນຕົ້ນ: ການລະບາດຂອງພະຍາດສັດ (ໄຂ້ເລືອດດຳ) ປະກົດການຫຍໍ້ທໍ້ທາງສັງຄົມ (ຂີ້ລັກງັດແງະ, ຢາເສບຕິດ), ເງິນເຟີ້ຄ່າຄອງຊີບສູງ, ໄພພິບັດ ແລະ ອື່ນໆ ຈາກນັ້ນແຂວງເຮົາຍັງພົບຄວາມຫຍຸ້ງຍາກດ້ານໜີ້ສິນການລົງທຶນຂອງລັດ ແລະ ການແກ້ໄຂພື້ນຖານໂຄງລ່າງສາທາລະນຸປະໂພກຕ່າງໆ ບໍ່ທັນກໍ່ສ້າງສ້ອມແປງສຳເລັດ ແຕ່ດ້ວຍຄວາມພະຍາຍາມຢ່າງຕັ້ງໜ້າຂອງຄະນະພັກ, ຄະນະນຳຂັ້ນແຂວງ, ຄວາມເປັນເຈົ້າການຂອງບັນດາພະແນກການ, ອົງການທຽບເທົ່າ, ເມືອງ ແລະ ການປະກອບສ່ວນຂອງສັງຄົມ ໃນການພັດທະນາເສດຖະກິດ-ສັງຄົມ 6 ເດືອນ ຕົ້ນປີ 2024 ເຮັດໃຫ້ມີທ່າດີຂຶ້ນການໃນຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ດັ່ງກ່າວສາມາດຍາດໄດ້ຜົນສຳເລັດດັ່ງນີ້: ລວມຍອດຜະລິດຕະພັນ



สแกนด้วย CamScanner
สแกนด้วย CamScanner

ພາຍໃນ (GDP) 6 ເດືອນຕົ້ນ ປະຕິບັດໄດ້ 4.969 ຕື້ກີບ, ເທົ່າກັບ, 58,2% ອັດຕາການຂະຫຍາຍຕົວຂອງເສດຖະກິດ ຢູ່ໃນລະດັບ 4,3% (ມະຕິຮັບຮອງຂະຫຍາຍຕົວ GDP 6,5% ຂຶ້ນໄປ ເທົ່າກັບ 8.540 ຕື້ກີບ); ການຈັດເກັບລາຍຮັບເຂົ້າງົບປະມານແຫ່ງລັດ ປະຕິບັດໄດ້ 136,38 ຕື້ກີບ, ເທົ່າກັບ 66,30% ຂອງແຜນການປີ (ມະຕິຮັບຮອງເບື້ອງຕົ້ນ 205,71 ຕື້ກີບ); ລາຍຈ່າຍງົບປະມານປະຕິບັດໄດ້ 271,92 ຕື້ກີບ, ເທົ່າກັບ 54,41% ຂອງແຜນການປີ (ມະຕິຮັບຮອງ 405,13 ຕື້ກີບ); ດຸ່ນດ່ຽງງົບປະມານ ສູນກາງດຸ່ນດ່ຽງໃຫ້ 243,53 ຕື້ກີບ, ເທົ່າກັບ 64,18% ຂອງແຜນການປີ (ມະຕິຮັບຮອງ 284,82 ຕື້ກີບ); ການລົງທຶນລັດ (ງົບປະມານພາຍໃນ) ປະຕິບັດໄດ້ 59,67 ຕື້ກວ່າກີບ, ເທົ່າກັບ 63,08%, ຂອງແຜນການປີ (ມະຕິຮັບຮອງ 274 ຕື້ກີບ); ມູນຄ່າການສົ່ງອອກປະຕິບັດໄດ້ 1.021 ຕື້ກວ່າກີບ, ເທົ່າກັບ 86% ຂອງແຜນການປີ (ມະຕິຮັບຮອງ 1.187 ຕື້ກວ່າກີບ); ເຂົ້ານາແຊງປະຕິບັດໄດ້ 64,538 ໂຕນ, ລື່ນແຜນ 5% ຂອງແຜນການປີ, ຜົກກະສິກຳເປັນສິນຄ້າ ປະຕິບັດໄດ້ 100% ຂອງແຜນການປີ (ມະຕິຮັບຮອງ 594.925 ໂຕນ); ການສະໜອງຊີ້ນ, ໄຂ່ ແລະ ປາ ປະຕິບັດໄດ້ 15.834 ໂຕນ ເທົ່າກັບ 56,91% ຂອງແຜນການປີ (ມະຕິຮັບຮອງ 27.284 ໂຕນ); ມູນຄ່າການອຸດສະຫະກຳປຸງແຕ່ງ ແລະ ຫັດຖະກຳປະຕິບັດໄດ້ 255 ຕື້ກີບ, ເທົ່າກັບ 62% ຂອງແຜນການປີ (ມະຕິຮັບຮອງ 413 ຕື້ກວ່າກີບ); ບ້ານຊົມໃຊ້ໄຟຟ້າໃນລະບົບ ປະຕິບັດໄດ້ 100%; ຕິດຕັ້ງໄຟຟ້າເຂົ້າຫຼັງຄາເຮືອນ ປະຕິບັດ 186 ຫຼັງຄາເຮືອນ 51,14% ຂອງແຜນການປີ (ມະຕິຮັບຮອງ 350 ຫຼັງຄາເຮືອນ); ຂຶ້ນທະບຽນອອກໃບຕາດິນ ປະຕິບັດໄດ້ 5.555 ຕອນ, ເທົ່າກັບ 55% ຂອງແຜນການປີ (ມະຕິຮັບຮອງ 10.000 ຕອນ); ບໍລິມາດຂົນສົ່ງໂດຍສານ ປະຕິບັດໄດ້ 93.900 ເທື່ອຄົນ; ສັນຍານຄວບຄຸມພື້ນທີ່ຂອງແຂວງ ກວມເອົາ 545 ບ້ານ, ກວມເອົາ 94,29%ຂອງຈຳນວນບ້ານທັງໝົດ ຫຼື ປະຕິບັດໄດ້ເທົ່າກັບ 98,21% ຂອງແຜນການປີ; ຄາດໝາຍສຶກສາທິການ ແລະ ກິລາ ບັນລຸ 7 ຄາດໝາຍ: 1) ອັດຕາເຂົ້າຮຽນຂອງເດັກ 5 ປີ; 2) ອັດຕານັກຮຽນເຂົ້າຮຽນໃໝ່ ປ.1; 3) ເຂົ້າຮຽນລວມໃໝ່ ປ.5; 4) ດັດສະນີຄວາມສະເໝີພາບຍິງ-ຊາຍ ຂອງອັດຕາການເລື່ອນຊັ້ນ ປ.5 ຂຶ້ນ ມ.1;5) ອັດຕາເຂົ້າຮຽນໃໝ່ລວມ ມ.4; 6) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນໃຫ້ໄດ້ບຳລຸງ ຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ; 7) ສົ່ງເສີມໃຫ້ມວນຊົນທຸກເພດ, ທຸກໄວໄດ້ເຂົ້າຮ່ວມການຫັດກາຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາ ເພື່ອສຸຂະພາບ, ເຂົ້າຮ່ວມສ້າງຂະບວນການເຄື່ອນໄຫວແຂ່ງ ຂັນກິລາປະຈຳປີ, ກິລາບຸນປະເພນີ ແລະ ກິລາວັນສຳຄັນຕ່າງໆຂອງຊາດ ແລະ ສາກົນ; ຄາດໝາຍສາທາລະ ນະສຸກ ບັນລຸ ຄາດໝາຍ: 1) ອັດຕາສ່ວນຂອງເດັກລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ; 2) ອັດຕາສ່ວນຂອງເດັກລຸ່ມ 5 ປີ ທີ່ມີລວງສູງ ຕ່ຳກວ່າມາດຕະຖານ; 3) ອັດຕາການຕາຍຂອງເດັກລຸ່ມ 1 ປີ ຂອງເດັກນ້ອຍເກີດມີຊີວິດ; 4) ອັດຕາການຕາຍຂອງເດັກລຸ່ມ 5 ປີ ຂອງເດັກນ້ອຍເກີດມີຊີວິດ; 5) ອັດຕາສ່ວນການຕາຍຂອງແມ່ ຕໍ່ການເກີດມີຊີວິດ; 6) ອັດຕາການປົກຄຸມດ້ວຍປະກັນສຸຂະພາບອັດ; 7) ອັດຕາຊົມໃຊ້ວິດຖ່າຍ; 8) ອັດຕາການສັກຢາວັກຊີນກັນພະຍາດ; 9)ອັດຕາການຊົມໃຊ້ນ້ຳສະອາດ; 10) ອັດຕາການຮັບຮອງບ້ານສາທາລະນະສຸກແບບຢ່າງ 11) ອັດຕາສ່ວນການເກີດມີແພດຜູ້ຊຳນານຊ່ວຍເກີດ; ສຶກສາຊຸມຊົນກ່ຽວກັບຄວາມອັນຕະລາຍຂອງລະເບີດບໍ່ທັນແຕກໃຫ້ປະຊາຊົນ ປະຕິບັດໄດ້ 38 ບ້ານເທົ່າກັບ 63% ຂອງແຜນການປີ (ມະຕິຮັບຮອງ 60 ບ້ານ); ກວດກູ້ລະເບີດບໍ່ທັນແຕກອອກຈາກພື້ນທີ່ ປະຕິບັດໄດ້ 287 ເຮັກຕາ, ເທົ່າກັບ 51% ຂອງແຜນການປີ (ມະຕິຮັບຮອງ 563 ເຮັກຕາ); ຈຳນວນນັກທ່ອງທ່ຽວ ປະຕິບັດໄດ້ 122.622 ເທື່ອຄົນ, ເທົ່າກັບ 90% ຂອງແຜນການປີ (ມະຕິຮັບຮອງ 136.234 ເທື່ອຄົນ); ການສ້າງລາຍຮັບ ປະຕິບັດໄດ້ 16 ລ້ານກວ່າໂດລາ, ເທົ່າກັບ 87,43% ຂອງແຜນການປີ (ມະຕິຮັບຮອງ 18,3 ລ້ານໂດລາສະຫະລັດ); ການຜະລິດຂ່າວ ປະຕິບັດໄດ້ 2.863 ຂ່າວ, ເທົ່າກັບ 57,26% ຂອງແຜນການປ (ມະຕິຮັບຮອງ 5.300 ຂ່າວ).

ໄປຄຽງຄູ່ກັບຜົນສຳເລັດທີ່ພົ້ນເດັ່ນດັ່ງກ່າວ, ກອງປະຊຸມເຫັນວ່າ ຕໍ່ການຈັດຕັ້ງປະຕິບັດບາງຄາດໝາຍຂອງມະຕິຂອງສະພາປະຊາຊົນແຂວງ ແຜນພັດທະນາເສດຖະກິດ-ສັງຄົມ ໃນໄລຍະ 6 ເດືອນຕົ້ນປີ 2024, ຍັງມີບາງຄາດໝາຍຈຳນວນໜຶ່ງທີ່ມີຄວາມຄືບໜ້ານ້ອຍດັ່ງນີ້: ທຶນຊ່ວຍເຫຼືອ ເພື່ອການພັດທະນາ; ທຶນເອກະຊົນພາຍໃນ ແລະ



สแกนด้วย CamScanner

สแกนด้วย CamScanner

ຕ່າງປະເທດ; ຜົກສະບຽງອາຫານ; ການລ້ຽງສັດ; ສັກຢາປ້ອງກັນພະຍາດສັດ; ມູນຄ່າຈໍລະຈອນສິນຄ້າ; ມູນຄ່າການນໍາເຂົ້າ; ຜະລິດກະແສໄຟຟ້າ, ການຂະຫຍາຍຕາຂ່າຍໄຟຟ້າແຮງກາງ ແລະ ແຮງຕໍ່າ; ຂະຫຍາຍຕາຂ່າຍໄຟຟ້າເຂົ້າຄຸ້ມບ້ານ; ເຮັດໃຫ້ປ່າໄມ້ປົກຫຸ້ມ ຂອງເນື້ອທີ່ທົ່ວແຂວງ; ລະບົບການຄຸ້ມຄອງເອກະສານກ່ຽວກັບທີ່ດິນເຂົ້າໃນລະບົບທີ່ທັນສະໄໝເພື່ອຮັບປະກັນຄວາມຍືນຍົງຂອງມູນການນໍາໃຊ້; ຂຶ້ນທະບຽນປູກໄມ້; ປູກໄມ້; ສ້າງຄອບຄົວພົ້ນທຸກ; ສ້າງບ້ານພົ້ນທຸກ; ສ້າງເມືອງພົ້ນທຸກ; ສ້າງຄອບຄົວພັດທະນາ, ບ້ານພັດທະນາ ແລະ ສ້າງບ້ານໃຫຍ່ເປັນຕົວເມືອງນ້ອຍຊົນນະບົດ; ຂົງເຂດສຶກສາທິການ 05 ຄາດໝາຍ: ອັດຕາການປະລະການຮຽນຂອງນັກຮຽນ ປ.1; ອັດຕາຈົບຊັ້ນປະຖົມ ( ອັດຕາເລື່ອນຊັ້ນ ແລະ ຈົບຊັ້ນ); ອັດຕາເລື່ອນຊັ້ນປ.5 ຂຶ້ນ ມ.1 (ທຽບໃສ່ນັກຮຽນຕົ້ນປີ ປ.5); ອັດຕາການປະລະການຮຽນຂອງນັກຮຽນຊັ້ນປະຖົມ; ອັດຕາການປະລະການຮຽນຊັ້ນມັດທະຍົມຕອນຕົ້ນ; ເຖິງວ່າຄາດໝາຍ 06 ເດືອນຕົ້ນປີ ຂົງເຂດສາທາລະນະສຸກ 02 ຄາດໝາຍ: 1) ອັດຕາການສັກຢາວັກຊີນກັນພະຍາດ; 2) ອັດຕາສ່ວນການເກີດມີແພດຜູ້ຊໍານານຊ່ວຍເກີດ ໃຫ້ສືບຕໍ່ຈັດຕັ້ງປະຕິບັດໃຫ້ບັນລຸຕາມມະຕິກໍານົດໄວ້; ບົດຮຽນ; ຝຶກ ແລະ ພັດທະນາສີມືແຮງງານ; ຈັດຫາວຽກເຮັດງານທໍາໃນຕະຫຼາດແຮງງານ; ປຸກລະດົມໂຄສະນາຈັດຫາຜູ້ບໍລິຈາກເລືອດ; ຂະຫຍາຍການປົກຄຸມປະກັນສັງຄົມ; ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດການປະຕິບັດຊາດ ປະຊາທິປະໄຕ; ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍສິດທິເດັກ; ສ້າງຄອບຄອບ ແລະ ບ້ານແບບຢ່າງປະຕິບັດກົດໝາຍ; ປະເມີນຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ); ໂຄສະນາສຶກສາອົບຮົມສ້າງສະຕິເຄົາລົບກົດໝາຍໃຫ້ປະຊາຊົນຢູ່ຂັ້ນບ້ານ ແລະ ໂຮງຮຽນ; ຝຶກອົບຮົມກົດໝາຍໄລຍະສັ້ນ 45 ວັນ, ໃຫ້ຮາກຖານບ້ານ ແລະ ພະນັກງານການເມືອງ; ໂຄສະນາເຜີຍແຜ່ກົດໝາຍທາງວິທະຍຸ, ໂຄສະນາກົດໝາຍທາງໂທລະໂຄ່ງ.

ມາດຕາ 02 ຮັບຮອງເອົາທິດທາງແຜນວຽກຈຸດສຸມ ແລະ ມາດຕະການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2024

ກອງປະຊຸມເຫັນດີເປັນເອກະພາບຕໍ່ 6 ທິດທາງແຜນວຽກຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ 6 ເດືອນທ້າຍປີ 2024 ແລະ ມາດຕະການຈັດຕັ້ງປະຕິບັດຕາມການຂອງອົງການປົກຄອງແຂວງ, ເພື່ອຮັບ ປະກັນໃຫ້ແຜນວຽກຈຸດສຸມບັນລຸຕາມແຜນ, ກອງປະຊຸມມອບໃຫ້ອົງການປົກຄອງແຂວງ ຈັດຕັ້ງປະຕິບັດບາງວຽກຈຸດສຸມ ແລະ ມາດຕະການເພີ່ມເຕີມ ດັ່ງນີ້:

1. ສືບຕໍ່ຮັບປະກັນຄວາມມີສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍທາງສັງຄົມ ຢ່າງໜັກແໜ້ນ, ທັນການພັດທະນາເສດຖະກິດ-ສັງຄົມ ຕິດພັນກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຮອບດ້ານທົ່ວປວງຊົນ, ສ້າງຄວາມສາມັກຄີປອງດອງ, ປອດໄພ, ສີວິໄລ ແລະ ຍຸຕິທໍາ;
2. ສືບຕໍ່ຮັບປະກັນໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ຄຽງຄູ່ກັບການແກ້ໄຂຄວາມຫຍຸ້ງຍາກ ທາງດ້ານການເງິນ ດ້ວຍຈັ່ງຫວະທີ່ໝັ້ນທ່ຽງ ຫັນໂຄງປະກອບເສດຖະກິດໃຫ້ໄປຕາມທິດຫັນເປັນອຸດສາຫະກໍາ ແລະທັນສະໄໝ, ອອກແຮງລະດົມ-ຊຶນຂວາຍການລົງທຶນພາຍໃນ ແລະ ຕ່າງປະເທດ ສ້າງເງື່ອນໄຂ ແລະ ສະພາບແວດລ້ອມທີ່ອໍານວຍໃຫ້ແກ່ການດໍາເນີນທຸລະກິດ-ບໍລິການຂອງຜູ້ປະກອບການ ແລະ ປະຊາຊົນ;
3. ສຸມໃສ່ຈັດຕັ້ງປະຕິບັດຄາດໝາຍຂອງມະຕິສະພາປະຊາຊົນແຂວງ ສະບັບເລກທີ 01/ສພຂ.ສວ, ລົງວັນທີ 12 ມັງກອນ 2024 ໃຫ້ບັນລຸຕາມແຜນ;
4. ສຸມໃສ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ວ່າດ້ວຍການແກ້ໄຂຢາເສບຕິດ ເປັນວຽກບຸລິມະສິດ ຂອງແຜນພັດທະນາເສດຖະກິດ-ສັງຄົມ;
5. ເອົາໃຈໃສ່ປະສານສົມທົບກັບກະຊວງຂັ້ນຕົ້ນ: ຄົ້ນຄວ້າເພີ່ມເງິນເດືອນ, ເງິນນະໂຍບາຍອຸດໜູນ ໃຫ້ສອດຄ່ອງກັບສະພາບຕົວຈິງເພື່ອເປັນພື້ນຖານໃນການຈັດຕັ້ງປະຕິບັດປີ 2025, ເພື່ອແກ້ໄຂຊີວິດການເປັນຢູ່ຂອງ ພະນັກງານ-ລັດຖະກອນ, ທະຫານຕໍາຫຼວດ ທີ່ມີລາຍຮັບຕໍ່າ, ພະນັກງານຄູສອນ ແລະ ແພດອາສາ;
6. ສືບຕໍ່ຈັດຕັ້ງປະຕິບັດບັນດາຄາດໝາຍ ບໍ່ບັນລຸຕາມແຜນເປັນຕົ້ນ: ຜົກສະບຽງອາຫານ, ການສັກຢາກັນພະຍາດ, ຈໍລະຈອນສິນຄ້າ, ຜະລິດກະແສໄຟຟ້າ, ຂະຫຍາຍຕາຂ່າຍໄຟຟ້າແຮງກາງ, ຂະຫຍາຍຕາຂ່າຍໄຟຟ້າແຮງຕໍ່າ, ຂະຫຍາຍຕາຂ່າຍເຂົ້າຄຸ້ມບ້ານ, ຝຶກ ແລະ ພັດທະນາສີມືແຮງງານ, ຈັດຫາວຽກເຮັດງານທໍາ



สแกนด้วย CamScanner

ປຸກລະດົມໂຄສະນາບໍລິຈາກເລືອດ, ການປົກຄຸມປະກັນສັງຄົມ, ນະໂຍບາຍຕໍ່ຜູ້ທີ່ມີຜົນງານ, ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍສິດທິເດັກ, ສ້າງຄອບຄົວ ແລະ ບ້ານແບບຢ່າງປະຕິບັດກົດໝາຍ, ໂຄສະນາສຶກສາອົບຮົມສ້າງລະຫົວເຄົາລົບກົດໝາຍ, ຝຶກອົບຮົມກົດໝາຍໄລຍະສັ້ນ 45 ວັນ, ໂຄສະນາເຜີຍແຜ່ກົດໝາຍທາງວິທະຍຸ ແລະ ທາງໂທລະໂຄ່ງ ຢ່າງທົ່ວເຖິງກວ້າງຂວາງ;

7. ເອົາໃຈໃສ່ການຄຸ້ມຄອງລາຄາສິນຄ້າໂດຍສະເພາະແມ່ນສິນຄ້າທີ່ມີຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງປະຊາຊົນເປັນຕົ້ນແມ່ນໝວດສິນຄ້າໃຊ້ສອຍອຸປະໂພກ ແລະ ບໍລິໂພກຕ່າງໆ;

8. ຊຸກຍູ້ການປະຕິບັດນະໂຍບາຍສົ່ງເສີມ SME ແລະ ການຜະລິດເປັນສິນຄ້າ, ການສ້າງຕົວແບບໃນການພັດທະນາຢູ່ບັນດາເມືອງຕ່າງໆ. ການຜະລິດກະສິກຳເພື່ອເປັນສິນຄ້າ, ການສ້າງມູນຄ່າເພີ່ມໃຫ້ສິນຄ້າ;

9. ເອົາໃຈໃສ່ຊຸກຍູ້ສົ່ງເສີມ ແລະ ດຶງດູດການລົງທຶນໃຫ້ຫຼາຍຂຶ້ນ ແກ້ໄຂຂອດຂັ້ນການປະສານງານລະຫວ່າງຂະແໜງການດ້ວຍກັນໃຫ້ມີຄວາມໂລ່ງລ່ຽນ, ເປັນລະບົບຕໍ່ເນື່ອງ, ມີຖານຂໍ້ມູນທີ່ຊັດເຈນເພື່ອຮອງຮັບໃຫ້ແກ່ການລົງທຶນບໍ່ທັນຊັດເຈນ ໂດຍສະເພາະຂໍ້ມູນດ້ານທີ່ດິນ, ການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຕາມກົດໝາຍຍັງຢ່າງທັນແຂງແຮງ;

10. ສຸມໃສ່ຈັດຕັ້ງປະຕິບັດເກັບລາຍຮັບເຂົ້າງົບປະມານ ໃຫ້ບັນລຸຕາມແຜນ ຫຼື ລື່ນແຜນ, ທັນເອົາການຄຸ້ມຄອງລາຍຮັບດ້ວຍລະບົບທັນສະໄໝ ໃຫ້ກວມເອົາທຸກການເກັບລາຍຮັບເຂົ້າງົບປະມານ, ຕ້ານ ແລະ ສະກັດກັ້ນທຸກການຮົ່ວໄຫຼຂອງລາຍຮັບ, ການຄ້າຂາຍເຖື່ອນຕາມລຽບຊາຍແດນ ທັງສົ່ງເຂົ້າ ແລະ ສົ່ງອອກ ໃຫ້ຮັດກຸມ, ຊຸກຍູ້ບັນດາຂະແໜງການ ແລະ ຄຸ້ມຄອງຖານລາຍຮັບທີ່ມີແລ້ວ ມອບເຂົ້າງົບປະມານໃຫ້ຖືກຕ້ອງ ແລະ ຄົບຖ້ວນພ້ອມທັງສຸມໃສ່ເກັບກຳຂໍ້ມູນ ແລະ ຂຸດຄົ້ນແຫຼ່ງລາຍຮັບທີ່ປົ່ງຊ້ອນ ໃຫ້ມີປະສິດທິຜົນສູງ; ສືບຕໍ່ທັນຫົວໜ່ວຍງົບປະມານ ແລະ ຫົວໜ່ວຍທຸລະກິດ ໃຫ້ຖືບັນຊີຫຼາຍຂຶ້ນ;

11. ເອົາໃຈໃສ່ຕິດຕາມກວດກາສິນຄ້າ, ນ້ຳມັນເຊື້ອໄຟ ລວມທັງການເຄື່ອນຍ້າຍສິນຄ້າ ເຂັ້ມງວດໃນການກວດກາສິນຄ້າເຄື່ອງຂອງນຳເຂົ້າ-ສົ່ງອອກ, ເພື່ອອັດຊ່ອງຫວ່າງການຮົ່ວໄຫຼ, ຂອດບໍລິການແມ່ນມີການກະທັດລັດວ່ອງໄວ ແລະ ອຳນວຍຄວາມສະດວກ ໃຫ້ແກ່ຜູ້ປະກອບການໃນການເຄື່ອນໄຫວສົ່ງອອກ-ນຳເຂົ້າສິນຄ້າ ແຕ່ລະຄັ້ງທັງຮັບປະກັນຄວາມຖືກຕ້ອງໃນການປະຕິບັດກົດໝາຍ;

12. ເອົາໃຈໃສ່ຄຸ້ມຄອງການລົງທຶນຂອງລັດໃຫ້ເຂັ້ມງວດ, ຈັດສັນແບ່ງຂັ້ນຄຸ້ມຄອງໄປຕາມຂະແໜງການ ແລະ ເມືອງ ໃຫ້ມີຄວາມຊັດເຈນ ແລະ ສອດຄ່ອງຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ; ພ້ອມທັງຊຸກຍູ້ບັນດາຂະແໜງການ ຜັນຂະຫຍາຍກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງ ລົງສູ່ບັນດາເມືອງເພື່ອຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ຂັ້ນຕອນການສ້າງແຜນ ແລະ ການຈັດຕັ້ງປະຕິບັດແຜນລົງທຶນ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້;

13. ສືບຕໍ່ເອົາໃຈໃສ່ຄຸ້ມຄອງຈັດເກັບລາຍຮັບຄ່າທຳນຽມ, ຄ່າບໍລິການວິຊາການ ບໍ່ທັນສອດຄ່ອງກັບລະບຽບກົດໝາຍກຳນົດ ເປັນຕົ້ນ: ລາຍຮັບຄ່າທຳນຽມຈົດເປັນລາຍຮັບວິຊາການ, ການປະຕິບັດລະບົບການຈົດຮັບ-ຈົດຈ່າຍ;

14. ສືບຕໍ່ເອົາໃຈໃສ່ເກັບລາຍຮັບຈາກພາສີທີ່ດິນ ເຖິງວ່າມີນິຕິກຳເປັນເຄື່ອງມື ໃນການເຄື່ອນໄຫວແລ້ວກໍ່ຕາມແຕ່ຂອດການຈັດຕັ້ງປະຕິບັດຕົວຈິງຍັງພົບຄວາມຫຍຸ້ງຍາກ ບັນດາຖານຂໍ້ມູນການເກັບຍັງບໍ່ສອດຄ່ອງກັບສະພາບຕົວຈິງ, ຂອດການປະສານສົມທົບລະຫວ່າງຂະແໜງການອ້ອມຂ້າງ ຍັງບໍ່ທັນທະລຸໂລ່ງ ການປະຕິບັດໜ້າທີ່ຂອງພະນັກງານ ທີ່ໄດ້ຮັບການມອບໝາຍ ໃຫ້ໄປປະຕິບັດໜ້າທີ່ ໃນແຕ່ລະກຸ່ມບ້ານ ຕາມຄວາມຮັບຜິດຊອບ;

15. ສືບຕໍ່ເອົາໃຈໃສ່ຈັດຕັ້ງປະຕິບັດ ດຳລັດສະບັບເລກທີ 599/ລບ, ລົງວັນທີ 29 ກັນຍາ 2021 ວ່າດ້ວຍ ລົດລັດບໍລິຫານ ດ້ວຍການຈັດສັນ ແລະ ປະກອບລົດບໍລິຫານ ໃຫ້ເປັນຮູບປະທຳ;



สแกนด้วย CamScanner

16. ສືບຕໍ່ເປັນເຈົ້າການປະສານສົມທົບກັບອົງການປົກຄອງແຂວງ-ເມືອງ ເຜີຍແຜ່ ແລະ ຜັນຂະຫຍາຍດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ສະບັບເລກທີ 205/ລບ, ໂດຍສະເພາະ ການກວດກາຄວາມຈຳເປັນໃນການນຳໃຊ້ງົບປະມານ, ຄວາມຖືກຕ້ອງ ແລະ ຄວາມເໝາະສົມໃນການນຳໃຊ້ງົບປະມານ ທີ່ບັນດາຂະແໜງການສະເໜີຂໍເບີກຈ່າຍ ໃນແຕ່ລະຄັ້ງ, ພ້ອມນັ້ນ, ກໍໄດ້ພິຈາລະນາແກ້ໄຂລາຍຈ່າຍຈຳເປັນຂອງຂະແໜງການໃນແຕ່ລະໄລຍະ ຕາມທ່າແຮງທີ່ມີຕົວຈິງ;

17. ສືບຕໍ່ເອົາໃຈໃສ່ການຂຶ້ນແຜນລາຍຈ່າຍງົບປະມານ ຕ້ອງອີງໃສ່ຄວາມຮຽກຮ້ອງຕ້ອງການຕົວຈິງ ເພື່ອຮັບປະກັນການປະຢັດ ແລະ ຕ້ານການຮົ່ວໄຫຼ ຂອງງົບປະມານແຫ່ງລັດ;

18. ເອົາໃຈໃສ່ໃນການກະກຽມຄວາມພ້ອມຢ່າງຮອບດ້ານໃນການເປັນເຈົ້າພາບ ກິລານັກຮຽນມັດທະຍົມທົ່ວປະເທດ ຄັ້ງທີ VII ທີ່ແຂວງເປັນເຈົ້າພາບ;

19. ສືບຕໍ່ແກ້ໄຂບັນຫາການຂາດແຄນແຮງງານພາຍໃນແຂວງ, ສຸມໃສ່ພັດທະນາສີມືແຮງງານໃຫ້ຫຼາຍສາຂາອາຊີບ ໃຫ້ມີຄຸນນະພາບ ເພື່ອສາມາດຕອບສະໜອງຄວາມຮຽກຮ້ອງຕ້ອງການຂອງຕະຫຼາດແຮງງານພາຍໃນແຂວງ ແລະ ສາມາດປະກອບອາຊີບອິດສະລະ ແລະ ກາຍເປັນຜູ້ປະກອບການ;

20. ມອບໃຫ້ອົງການປົກຄອງແຂວງສືບຕໍ່ປະຕິບັດມາດຕະການໃນການແກ້ໄຂບັນຫາການຂາດແຄນຄູສອນໃນການແກ້ໄຂບັນຫາປະລະການຮຽນ ຕາມມະຕິເລກທີ 09/ລບ, ລົງວັນທີ 17 ກໍລະກົດ 2023 ໃຫ້ປະກົດຜົນເປັນຈິງ;

21. ເອົາໃຈໃສ່ ຜັນຂະຫຍາຍຄຳແນະນຳ ສະບັບເລກທີ 620/ສທ, ລົງວັນທີ 23 ພຶດສະພາ 2024 ກ່ຽວກັບກົນໄກ ແລະ ວິທີການອອກບັດປະກັນສຸຂະພາບ ສຳລັບຄອບຄົວທຸກຍາກ; ແຈ້ງການ ສະບັບເລກທີ 824/ສທ, 28 ກໍລະກົດ 2024 ກ່ຽວກັບ ການປັບປຸງອັດຕາທົດແທນ ແລະ ນະໂຍບາຍຈ່າຍຮ່ວມປະຊາຊົນຜູ້ທີ່ມີເງື່ອນໄຂຈ່າຍ ໃນເວລາໄປໃຊ້ບໍລິການປິ່ນປົວສຸຂະພາບ ຢູ່ສະຖານທີ່ບໍລິການປິ່ນປົວຂັ້ນຕ່າງໆ;

22. ປະສານງານແຕ່ຫົວທີກັບພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະບັນດາໂຄງການທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ, ວັດທະນາທຳ-ສັງຄົມ ໃຫ້ໄດ້ຮັບຮອງຈາກສະພາປະຊາຊົນແຂວງ ຈຶ່ງສາມາດດຳເນີນໄດ້.

**ມາດຕາ 03 ການຈັດຕັ້ງປະຕິບັດ**

1. ມອບໃຫ້ອົງການປົກຄອງແຂວງ, ຊີ້ນຳອົງການປົກຄອງເມືອງ, ຊີ້ນຳບັນດາພະແນກການ, ອົງການທຽບເທົ່າ ແລະ ການຈັດຕັ້ງທຸກຂັ້ນຈັດຕັ້ງປະຕິບັດມະຕິສະບັບນີ້ ຢ່າງເຂັ້ມງວດ;
2. ມອບໃຫ້ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະ ນະກຳມະການ, ສະມາຊິກສະພາປະຊາຊົນແຂວງ, ດຳເນີນການຕິດຕາມ-ກວດກາການຈັດ ຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ ແລະ ຂອບເຂດສິດໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 04 ຜົນສັກສິດ**

ມະຕິສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ປະທານສະພາປະຊາຊົນແຂວງສາລະວັນ

ສີເຮັ້ງ ທອນສົມບັດ

สแกนด้วย CamScanner